ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການຕ່າງປະເທດ                                        ເລກທີ 007027 /ຕປທ.ກກສ2.

ນະຄອນຫລວງວຽງຈັນ, ວັນທີ 18 ກັນຍາ 2013.

## ແຈ້ງການ

ເຖິງ :
- ທ່ານຫົວໜ້າຫ້ອງວ່າການປະທານປະເທດ,
- ທ່ານຫົວໜ້າຫ້ອງວ່າການສະພາແຫ່ງຊາດ,
- ທ່ານຫົວໜ້າຫ້ອງວ່າການສູນກາງພັກ,
- ທ່ານຫົວໜ້າຫ້ອງວ່າການລັດຖະບານ,
- ທ່ານປະທານຄະນະຂອງສູນກາງພັກ ແລະ ອົງການທຽບເທົ່າຂັ້ນສູນກາງ,
- ທ່ານລັດຖະມົນຕີວ່າການທຸກກະຊວງ.
- ທ່ານເຈົ້າຄອງນະຄອນຫລວງວຽງຈັນ,
- ທ່ານເຈົ້າແຂວງທຸກໆແຂວງໃນທົ່ວປະເທດ,
- ທ່ານປະທານ ສານປະຊາຊົນສູງສຸດ,
- ທ່ານປະທານອົງການໄອຍະການປະຊາຊົນສູງສຸດ,
- ປະທານອົງການຈັດຕັ້ງມະຫາຊົນຂັ້ນສູນກາງ,

ເລື່ອງ: ຍົກເລີກວິຊາແຈ້ງອອກສຳລັບບຸກຄົນທີ່ຖືໜັງສືຜ່ານແດນລັດຖະການ ແລະ ການທູດ ຈາກກົມກົງສຸນ ກະຊວງການຕ່າງປະເທດ.

ອີງຕາມມະຕິຕົກລົງຂອງກອງປະຊຸມລັດຖະບານ ປະຈຳເດືອນກໍລະກົດ 2013 ສະບັບເລກທີ 08/ລບ, ລົງວັນທີ 15 ສິງຫາ 2013 ( ຂໍ້ VII ), ວ່າດ້ວຍການເຫັນດີໃຫ້ຍົກເລີກວິຊາແຈ້ງອອກສຳລັບບຸກຄົນທີ່ຖືໜັງສືຜ່ານແດນລັດຖະການ ແລະ ການທູດ.

ກະຊວງການຕ່າງປະເທດຂໍຖືເປັນກຽດແຈ້ງໃຫ້ບັນດາກະຊວງ, ອົງການຕ່າງໆທັງຢູ່ສູນກາງ ແລະ ທ້ອງຖິ່ນຊາບ ແລະ ປະຕິບັດດັ່ງນີ້:

1. ນັບແຕ່ວັນທີ 1 ຕຸລາ 2013 ເປັນຕົ້ນໄປ, ພະນັກງານ, ລັດຖະກອນຜູ້ທີ່ມີສິດຖືໜັງສືຜ່ານແດນລັດຖະການ ແລະ ການທູດ ຂອງ ສປປ ລາວ ຈະໄດ້ຮັບການຍົກເລີກການແຈ້ງອອກວິຊາ ຈາກກົມກົງສຸນ, ກະຊວງການຕ່າງປະເທດ. ໝາຍຄວາມວ່າ ກົມກົງສຸນ ກະຊວງການຕ່າງປະເທດ ຈະບໍ່ຈຳເປັນຈ້ຳວິຊາອອກໃຫ້ເປົ້າໝາຍທີ່ກ່າວມາຂ້າງເທິງນັ້ນອີກ.

2. ຜູ້ທີ່ໄດ້ຮັບອະນຸຍາດໃຫ້ໄປເຄື່ອນໄຫວຕ່າງປະເທດ ຕ້ອງປະຕິບັດຕາມລະບຽບຂັ້ນຕອນດັ່ງທີ່ເຄີຍປະຕິບັດມາຢ່າງເຄັ່ງຂັດ, ພາຍຫລັງກັບມາໃຫ້ສະຫລຸບລາຍງານໃຫ້ກະຊວງການຕ່າງປະເທດ ແລະ ຄະນະພົວພັນຕ່າງປະເທດ ແລະ ພາກສ່ວນທີ່ອະນຸມັດທຸກໆຄັ້ງ.
3. ສໍາລັບບຸກຄົນທີ່ຖືໜັງສືຜ່ານແດນລັດຖະການ ແລະ ການທູດ ທີ່ຈະເດີນທາງໄປຕ່າງປະເທດ, ເຊິ່ງເປັນປະເທດທີ່ຍັງບໍ່ທັນເຊັນສັນຍາຍົກເວັ້ນວີຊາ ລັດຖະການ ແລະ ການທູດ ແມ່ນຕ້ອງມາຂໍຈົດໝາຍທາງການທູດຈາກກົມກົງສຸນກະຊວງການຕ່າງປະເທດຄືເຄີຍປະຕິບັດຜ່ານມາ ເພື່ອໄປຂໍວີຊານໍາປະເທດທີ່ຈະໄປເຄື່ອນໄຫວວຽກລັດຖະການ ( ບັນຊີລາຍຊື່ບັນດາປະເທດທີ່ຍົກເວັ້ນວີຊາ 2 ຝ່າຍ ຄັດຕິດມາພ້ອມນີ້ ).

ດັ່ງນັ້ນ, ກະຊວງການຕ່າງປະເທດຈຶ່ງຂໍແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ. ໗໒

ຮອງນາຍົກລັດຖະມົນຕີ

ລັດຖະມົນຕີວ່າການກະຊວງການຕ່າງປະເທດ

ກະຊວງການຕ່າງປະເທດ ລັດຖະມົນຕີ

ທອງລຸນ ສີສຸລິດ.